ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ເລກທີ 14 /ພນ

ນະຄອນຫຼວງວຽງຈັນ, ວັນທີ 13 ກັນຍາ 2016

# ຄໍາແນະນໍາ

# ກ່ຽວກັບການສ້າງຕັ້ງເທດສະບານ, ນະຄອນ

- ອີງຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກະຊວງພາຍໃນສະບັບເລກທີ 253/ນຍ, ລົງວັນທີ 19 ສິງຫາ 2011;
- ອີງຕາມ ຄໍາສັ່ງວ່າດ້ວຍການສ້າງຕັ້ງເທດສະບານ, ນະຄອນ ສະບັບເລກທີ 23/ນຍ, ລົງວັນທີ01 ສິງຫາ 2016.

ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງ ປີ 2015 ໄດ້ກໍານົດໃຫ້ມີເທດສະບານ, ນະຄອນ ຊຶ່ງເປັນເຂດການປົກຄອງທ້ອງຖິ່ນຂັ້ນເມືອງ ແຕ່ການກໍານົດດັ່ງກ່າວ ຍັງມີລັກສະນະລວມໆ ຊຶ່ງສະແດງອອກຄື: ເທດສະບານ ແລະ ນະຄອນ ຍັງມີໂຄງປະກອບການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ມີລັກສະນະຄ້າຍຄື ກັນກັບເມືອງ; ແຕ່ການກໍານົດໃຫ້ມີເທດສະບານ, ນະຄອນ ເປັນການປັບປຸງກົງຈັກຂອງອົງການປົກຄອງທ້ອງຖິ່ນ ໂດຍສະເພາະແມ່ນຂັ້ນເມືອງໃຫ້ກະທັດຮັດ, ໜັກແໜ້ນ, ມີລະບົບຣັດກຸມ ເຮັດໃຫ້ການເຄື່ອນໄຫວມີຄວາມໂລ່ງລ່ຽນ ແລະ ໂປ່ງໃສ ແນໃສ່ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ຄວາມເປັນເຈົ້າການ ໃນການພັດທະນາໃຫ້ສອດຄ່ອງ ກັບສະພາບຈຸດພິເສດ ແລະ ທ່າແຮງຂອງທ້ອງຖິ່ນຕົນ. ເພື່ອໃຫ້ການສ້າງຕັ້ງເທດສະບານ, ນະຄອນ ຖືກຈັດຕັ້ງ ປະຕິບັດໃຫ້ສອດຄ່ອງກັບລັດຖະທໍາມະນູນ ແລະ ກົດໝາຍ, ນາຍົກລັດຖະມົນຕີ ໄດ້ອອກຄໍາສັ່ງວ່າດ້ວຍການສ້າງຕັ້ງ ເທດສະບານ, ນະຄອນສະບັບເລກທີ 23/ນຍ, ລົງວັນທີ 01 ສິງຫາ2016.

ສະນັ້ນ, ເພື່ອເຮັດໃຫ້ມີຄວາມເຂົ້າໃຈເປັນເອກະພາບກັນໃນການຈັດຕັ້ງປະຕິບັດຄໍາສັ່ງດັ່ງກ່າວ, ລັດຖະມົນ ຕີກະຊວງພາຍໃນ ອອກຄໍາແນະນໍາ ດັ່ງນີ້:

## I. ຈຸດປະສົງ

- ເພື່ອຜັນຂະຫຍາຍ ເນື້ອໃນຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບປີ 2015 ແລະ ຄໍາສັ່ງຂອງ ນາຍົກລັດຖະມົນຕີ ກ່ຽວກັບການສ້າງຕັ້ງເທດສະບານ, ນະຄອນເຂົ້າໃນການຈັດຕັ້ງປະຕິບັດຕົວຈິງ;
- ເພື່ອເປັນບ່ອນອີງ ແລະ ຄູ່ມືໃຫ້ແກ່ອົງການປົກຄອງທ້ອງຖິ່ນ ໃນການດໍາເນີນການກະກຽມສ້າງຕັ້ງ ເທດສະບານ, ນະຄອນ ໃຫ້ມີຄວາມເຂົ້າໃຈທີ່ຖືກຕ້ອງ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ.

## II. ຄວາມໝາຍຂອງຄຳສັບ

**ຕົວເທດສະບານ, ຕົວນະຄອນ** ແມ່ນຕົວເມືອງຂອງເທດສະບານ, ນະຄອນຊຶ່ງແມ່ນສະຖານທີ່ດຳລົງຊີວິດຂອງຊຸມຊົນ ຕາມລັກສະນະດັ່ງນີ້:

- ເປັນທີ່ຕັ້ງຂອງອົງການປົກຄອງຂັ້ນແຂວງ, ຂັ້ນເມືອງ, ເຂດຈຸດສຸມເສດຖະກິດ-ສັງຄົມ;
- ຄວາມໜາແໜ້ນຂອງປະຊາກອນ ສຳລັບເທດສະບານ ສີ່ຮ້ອຍຫ້າສິບຄົນຕໍ່ກິໂລຕາແມັດ;
- ຄວາມໜາແໜ້ນຂອງປະຊາກອນ ສຳລັບນະຄອນ ເກົ້າຮ້ອຍຄົນຕໍ່ກິໂລຕາແມັດ;
- ມີລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກ ເຊັ່ນ: ຖະໜົນຫົນທາງ, ລະບົບລະບາຍນ້ຳ, ໂຮງຮຽນ, ໂຮງໝໍ, ເດີ່ນກິລາ, ສວນສາທາລະນະ, ນ້ຳປະປາຫຼື ນ້ຳສະອາດ, ໄຟຟ້າ, ໂທລະສັບ ແລະ ອື່ນໆ. ການກຳນົດພື້ນທີ່ຕົວເທດສະບານ, ຕົວນະຄອນແມ່ນກຳນົດເອົາພື້ນທີ່ທີ່ຜັງເມືອງກຳນົດ.

## III. ຂັ້ນຕອນ ແລະ ການປະກອບເອກະສານສ້າງຕັ້ງເທດສະບານ, ນະຄອນ

### 1. ຂັ້ນຕອນການສ້າງຕັ້ງ

ການສ້າງຕັ້ງເທດສະບານ, ນະຄອນ ໃຫ້ດຳເນີນຕາມຂັ້ນຕອນລຸ່ມນີ້:

1) ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອອກຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ເພື່ອກະກຽມສ້າງຕັ້ງເທດສະບານ, ນະຄອນ;
2) ຄະນະຮັບຜິດຊອບດັ່ງກ່າວ ກະກຽມເອກະສານ ແລະ ຂໍ້ມູນຕ່າງໆທີ່ຈຳເປັນເຊັ່ນ: ແຜນລາຍຮັບ-ລາຍຈ່າຍ, ໂຄງປະກອບກົງຈັກ, ບຸກຄະລາກອນ ແລະ ຂໍ້ມູນອື່ນໆ ເພື່ອເປັນບ່ອນອີງໃນການຄົ້ນຄວ້າ ແລະ ສ້າງບົດວິພາກ;
3) ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ສະເໜີການສ້າງຕັ້ງເທດສະບານ, ນະຄອນ ຕໍ່ສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຮັບຮອງ;
4) ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງສົ່ງໜັງສືສະເໜີຂໍສ້າງຕັ້ງເທດສະບານ, ນະຄອນ ຫາລັດຖະບານ ໂດຍຜ່ານກະຊວງພາຍໃນ.

### 2. ການປະກອບເອກະສານສະເໜີສ້າງຕັ້ງ

ເອກະສານປະກອບການສ້າງຕັ້ງ ມີດັ່ງນີ້:

1) ໜັງສືສະເໜີສ້າງຕັ້ງເທດສະບານ, ນະຄອນຂອງອົງການປົກຄອງແຂວງ, ນະຄອນຫຼວງຫາກະຊວງພາຍໃນ;
2) ມະຕິຕົກລົງຂອງສະພາປະຊາຊົນຂັ້ນແຂວງວ່າດ້ວຍການຮັບຮອງເອົາການສ້າງຕັ້ງເທດສະບານ,ນະຄອນ;
3) ຂໍ້ຕົກລົງ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ກະກຽມສ້າງຕັ້ງເທດສະບານ, ນະຄອນ;
4) ບົດວິພາກ.

## IV. ເງື່ອນໄຂໃນການສ້າງຕັ້ງເທດສະບານ, ນະຄອນ

ເມືອງທີ່ເປັນທີ່ຕັ້ງຂອງອົງການປົກຄອງແຂວງ ໃຫ້ສ້າງຕັ້ງເປັນເທດສະບານໄດ້ ໂດຍບໍ່ຕ້ອງມີເງື່ອນໄຂອື່ນມາປະກອບ, ແຕ່ຂັ້ນຕອນການສະເໜີ ແລະ ການປະກອບເອກະສານສະເໜີສ້າງຕັ້ງ ແມ່ນໃຫ້ປະຕິບັດຕາມຄຳແນະນຳສະບັບນີ້. ນອກນັ້ນ, ຍັງສາມາດສ້າງຕັ້ງເປັນນະຄອນໄດ້ ຖ້າຄົບເງື່ອນໄຂຕາມທີ່ໄດ້ກຳນົດໄວ້.

ສໍາລັບເມືອງຈັນທະບູລີ, ສີໂຄດຕະບອງ, ໄຊເສດຖາ, ສີສັດຕະນາກຂອງນະຄອນຫຼວງວຽງຈັນ ຖ້າຄົບເງື່ອນໄຂ ທີ່ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນກໍານົດ ແລະ ຖືກຕ້ອງຕາມຄໍາແນະນໍາສະບັບນີ້ແລ້ວໃຫ້ສະເໜີສ້າງຕັ້ງເປັນນະຄອນເລີຍ ໂດຍບໍ່ຕ້ອງຜ່ານຂັ້ນຕອນການສ້າງຕັ້ງເປັນເທດສະບານ.

ເມືອງອື່ນ ທີ່ຈະສ້າງຕັ້ງເປັນເທດສະບານ, ນະຄອນ ຕ້ອງຄົບເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນຕາຕະລາງ ລຸ່ມນີ້:

**ຕາຕະລາງ: ເງື່ອນໄຂການສ້າງຕັ້ງເທດສະບານ, ນະຄອນ.**

| ລ/ດ | ເງື່ອນໄຂ | ເທດສະບານ | | ນະຄອນ | |
|---|---|---|---|---|---|
| | | ຕົວເທດສະບານ | ທີ່ວເທດສະບານ | ຕົວນະຄອນ | ທົ່ວນະຄອນ |
| 1 | ຈໍານວນພົນລະເມືອງ | 10 000ຄົນ ຂຶ້ນໄປ | 40 000ຄົນ ຂຶ້ນໄປ | 25 000 ຄົນ ຂຶ້ນໄປ | 60 000 ຄົນ ຂຶ້ນໄປ |
| 2 | ຄວາມໜາແໜ້ນຂອງພົນລະເມືອງ | 450 ຄົນ/ກມ$^2$ ຂຶ້ນໄປ | | 900 ຄົນ/ກມ$^2$ ຂຶ້ນໄປ | |
| 3 | ອາຊີບກະສິກອນ | ບໍ່ເກີນ 30 % | | ບໍ່ເກີນ 25 % | |
| 4 | ທາງປູຢາງຫຼືປູເບຕົງ | 70 % ຂຶ້ນໄປ | | 90 % ຂຶ້ນໄປ | |
| 5 | ຄອບຄົວຊົມໃຊ້ໄຟຟ້າ | 95 % ຂຶ້ນໄປ | | 100 % | |
| 6 | ຄອບຄົວຊົມໃຊ້ລະບົບນໍ້າສະອາດ | 100 % | | 100 % | |
| 7 | ງົບປະມານ | ກຸ້ມຕົນເອງທາງດ້ານລາຍຈ່າຍບໍລິຫານປົກກະຕິ | | ກຸ້ມຕົນເອງທາງດ້ານລາຍຈ່າຍບໍລິຫານປົກກະຕິ ແລະ ມີສ່ວນແຮໄວ້ເພື່ອການລົງທຶນ | |
| 8 | ບ້ານພັດທະນາ | 85 % ຂຶ້ນໄປ | | 100 % | |

ນອກຈາກເງື່ອນໄຂ ທີ່ໄດ້ກໍານົດໄວ້ໃນຕາຕະລາງນີ້ແລ້ວ ເທດສະບານ, ນະຄອນ ຕ້ອງປະຕິບັດໃຫ້ໄດ້ນະໂຍບາຍ ຫົກສໍ ຄື: ສໍ ສີຂຽວ, ສໍ ສະຫງົບ, ສໍ ສະຫວ່າງ, ສໍ ສະອາດ, ສໍ ສະເໜ່ ແລະ ສໍ ສີວິໄລ.

## V. ການກໍານົດໂຄງປະກອບກົງຈັກ

ການສ້າງຕັ້ງເທດສະບານ, ນະຄອນ ຕ້ອງໄດ້ກໍານົດກົງຈັກຄືນໃໝ່ ໃຫ້ກະທັດຮັດ ບໍ່ແມ່ນປ່ຽນພຽງແຕ່ຊື່ຈາກເມືອງມາເປັນເທດສະບານ ຫຼື ນະຄອນເທົ່ານັ້ນ.

ການກໍານົດກົງຈັກ ແມ່ນໃຫ້ອີງໃສ່ວຽກຕົວຈິງ ທີ່ມີຢູ່ພາຍໃນເທດສະບານ, ນະຄອນ, ຖ້າມີວຽກຈິ່ງສ້າງກົງຈັກຂຶ້ນ ເພື່ອໃຫ້ສອດຄ່ອງກັບສະພາບຈຸດພິເສດ ແລະ ທ່າແຮງຂອງຕົນ ໝາຍຄວາມວ່າ: ເທດສະບານ, ນະຄອນແຕ່ລະແຫ່ງຈະບໍ່ມີຫ້ອງການຄືກັນ, ຖ້າວ່າວຽກໃດບໍ່ຈໍາເປັນ ກໍ່ບໍ່ໃຫ້ສ້າງຕັ້ງຫ້ອງການຂຶ້ນ ໂດຍໃຫ້ຂັ້ນແຂວງຮັບຜິດຊອບ.

ບັນດາຫ້ອງການ ທີ່ຂຶ້ນກັບຄວາມຮັບຜິດຊອບຂັ້ນແຂວງ ອາດມີດັ່ງນີ້:

1. ຫ້ອງການກະສິກໍາ ແລະ ປ່າໄມ້;
2. ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ;
3. ຫ້ອງການພະລັງງານ ແລະ ບໍ່ແຮ່;
4. ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
5. ແລະ ອື່ນໆ.

ໃຫ້ອົງການປົກຄອງແຂວງ, ນະຄອນຫຼວງ ສົມທົບກັບອົງການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າລະອຽດ ໃນການກຳນົດໂຄງປະກອບກົງຈັກຂອງເທດສະບານ, ນະຄອນ ໂດຍອີງໃສ່ໜ້າວຽກຕົວຈິງຂອງເທດສະບານ, ນະຄອນ ບົນພື້ນຖານການຕົກລົງເປັນເອກະພາບ ແລະ ຮັບຮອງຈາກສະພາປະຊາຊົນທ້ອງຖິ່ນ.

ສຳລັບອົງການພັດທະນາແລະບໍລິຫານຕົວເມືອງນະຄອນຫຼວງວຽງຈັນ (ອພບ) ແລະ ອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບຕ) ທີ່ເປັນທີ່ຕັ້ງອົງການປົກຄອງແຂວງ ແມ່ນຍັງຮັກສາຢູ່ຂັ້ນແຂວງຄືເກົ່າ.

## VI. ຄະນະຮັບຜິດຊອບ

### 1) ຄະນະຮັບຜິດຊອບຂັ້ນສູນກາງ

- **ບຸກຄະລາກອນ, ປະກອບດ້ວຍ:**
  - ຮອງລັດຖະມົນຕີ ກະຊວງພາຍໃນ — ເປັນຫົວໜ້າຄະນະ;
  - ຫົວໜ້າກົມການປົກຄອງທ້ອງຖິ່ນ — ເປັນຮອງຫົວໜ້າຄະນະ;
  - ຕາງໜ້າກະຊວງແຜນການແລະລົງທຶນ — ເປັນຄະນະ;
  - ຕາງໜ້າກະຊວງການເງິນ — ເປັນຄະນະ;
  - ຕາງໜ້າກະຊວງໂຍທາທິການແລະຂົນສົ່ງ — ເປັນຄະນະ;
  - ວິຊາການກົມການປົກຄອງທ້ອງຖິ່ນ — ເປັນຄະນະ;
  - ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ — ເປັນຄະນະ.
- **ໜ້າທີ່:**
  - ຄົ້ນຄວ້າ,ມີຄຳເຫັນຕໍ່ກັບການສະເໜີຂໍສ້າງຕັ້ງເທດສະບານ, ນະຄອນຂອງອົງການປົກຄອງຂັ້ນແຂວງ
  - ສົມທົບກັບອົງການປົກຄອງທ້ອງຖິ່ນກວດກາຂໍ້ມູນທີ່ຈຳເປັນ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂ ແລະ ລົງກວດກາເບິ່ງສະພາບຄວາມເປັນຈິງ, ຄວາມພ້ອມໃນການສ້າງຕັ້ງເທດສະບານ, ນະຄອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
  - ນຳສະເໜີຂັ້ນເທິງ ເພື່ອພິຈາລະນາອະນຸມັດສ້າງຕັ້ງເທດສະບານ, ນະຄອນ;
  - ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

### 2) ຄະນະຮັບຜິດຊອບຂັ້ນທ້ອງຖິ່ນ:

- **ບຸກຄະລາກອນ, ປະກອບດ້ວຍ:**
  - ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ — ເປັນຫົວໜ້າຄະນະ;
  - ຫົວໜ້າພະແນກພາຍໃນ — ເປັນຮອງຫົວໜ້າຄະນະ;
  - ຫົວໜ້າຄະນະຈັດຕັ້ງຂັ້ນແຂວງ — ເປັນຄະນະ;
  - ເຈົ້າເມືອງຂອງເມືອງທີ່ສະເໜີສ້າງຕັ້ງເທດສະບານ, ນະຄອນ — ເປັນຄະນະ;
  - ຫົວໜ້າຫ້ອງວ່າການຂັ້ນແຂວງ — ເປັນຄະນະ;
  - ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ — ເປັນຄະນະ;
  - ຫົວໜ້າພະແນກການເງິນ — ເປັນຄະນະ;
  - ຫົວໜ້າພະແນກແຜນການ ແລະ ການລົງທຶນ — ເປັນຄະນະ;
  - ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ — ເປັນຄະນະ.

- ໜ້າທີ່
  - ສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອເກັບກຳຂໍ້ມູນທີ່ຈຳເປັນ;
  - ສ້າງບົດວິພາກຂໍສະເໜີສ້າງຕັ້ງເທດສະບານ, ນະຄອນ (ໂຄງຮ່າງບົດວິພາກໄດ້ຄັດຕິດມາພ້ອມນີ້);
  - ລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບຄຳເຫັນຫຼືຄຳສະເໜີ ຂອງຄະນະຮັບຜິດຊອບຂັ້ນສູນກາງ ເພື່ອປັບປຸງແກ້ໄຂຂໍ້ຄົງຄ້າງ;
  - ສະໜອງຂໍ້ມູນທີ່ຈຳເປັນໃນການສ້າງຕັ້ງເທດສະບານ, ນະຄອນ ໃຫ້ແກ່ຄະນະຮັບຜິດຊອບຂັ້ນສູນກາງ;
  - ຮ່າງໜັງສືສະເໜີຂອງແຂວງ, ນະຄອນຫຼວງ ຫາລັດຖະບານ ເພື່ອຂໍອະນຸມັດສ້າງຕັ້ງເທດສະບານ, ນະຄອນ ໂດຍຜ່ານກະຊວງພາຍໃນ;
  - ແຕ່ງຕັ້ງກອງເລຂາ;
  - ໂຄສະນາປະຊາສຳພັນ, ເຜີຍແຜ່ ໃຫ້ປະຊາຊົນ ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບການສ້າງຕັ້ງເທດສະບານ, ນະຄອນ;
  - ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## VII. ການຈັດຕັ້ງປະຕິບັດ

1) ມອບໃຫ້ກົມການປົກຄອງທ້ອງຖິ່ນເປັນເຈົ້າການໂດຍກົງໃນການໂຄສະນາເຜີຍແຜ່, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້;
2) ອົງການປົກຄອງທ້ອງຖິ່ນມີໜ້າທີ່ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ;
3) ຂະແໜງພາຍໃນເປັນເຈົ້າການໃນການຄົ້ນຄວ້າ, ພົວພັນປະສານງານ ກ່ຽວກັບການສ້າງຕັ້ງເທດສະບານ ແລະ ນະຄອນຕາມສິດ ແລະ ໜ້າທີ່ຂອງຕົນ.

ລັດຖະມົນຕີ

ຄຳໝັ້ນ ສູນວິເລີດ